ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ສປປ ລາວ ແລະ ສສ. ຫວຽດນາມ ພົບປະແລກປ່ຽນບົດຮຽນ ເພື່ອເສີມຂະຫຍາຍການຮ່ວມມືໃນຂະແໜງການທະນາຄານ




ເພື່ອເປັນການເສີມຂະຫຍາຍການຮ່ວມມືສອງຝ່າຍ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ສສ. ຫວຽດນາມ, ໃນຕອນບ່າຍ ຂອງວັນທີ 26 ກໍລະກົດ 2023 ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມດ້ວຍ ທ່ານ ນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ-ຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ-ຄະນະກຳມະການຄຸ້ມຄອງຫຼັກຊັບ, ຮອງເຈົ້າແຂວງ 3 ທ່ານ ຈາກ ແຂວງຫຼວງພະບາງ, ຊຽງຂວາງ, ຈຳປາສັກ ແລະ ຄະນະກົມວິຊາການກ່ຽວຂ້ອງ ໄດ້ເຂົ້າພົບປະ ແລະ ແລກປ່ຽນບົດຮຽນກັບທະນາຄານແຫ່ງລັດ ສສ. ຫວຽດນາມ ຊຶ່ງນຳໂດຍ ທ່ານ ນາງ ຫງວຽນ ຖິ ຮົງ (Nguyễn Thị Hồng), ຜູ້ວ່າການທະນາຄານແຫ່ງລັດ ສສ. ຫວຽດນາມ. ໃນການພົບປະຄັ້ງນີ້, ທັງສອງຝ່າຍໄດ້ປຶກສາຫາລືກ່ຽວກັບບົດບາດຂອງທະນາຄານແຫ່ງລັດ ສສ. ຫວຽດນາມ ໃນການຊຸກຍູ້ຕະຫຼາດທຶນ,

ການສົ່ງເສີມການຊໍາລະສະສາງຂອງສອງສະກຸນເງິນ ກີບ ແລະ ດົງ ໃນຂອບເຂດທົ່ວປະເທດ ອີງໃສ່ການຕົກລົງຂອງລັດຖະບານສອງປະເທດໃນການເສີມຂະຫຍາຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຫົວຂໍ້ອື່ນໆ ເພື່ອເປັນການເສີມຂະຫຍາຍການຮ່ວມມືສອງຝ່າຍຂອງສອງທະນາຄານແຫ່ງລັດ ລາວ-ຫວຽດນາມ ໃຫ້ນັບມື້ຂະຫຍາຍຕົວ.









# ຂ່າວ-ພາບ: ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ